ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ

ຫ້ອງການກະຊວງ

2838

ເລກທີ ______ / ກງ. ຫກ

ນະຄອນຫຼວງວຽງຈັນ, ວັນທີ 15 DEC 2010

# ແຈ້ງການເພີ້ມເຕີມ

## ກ່ຽວກັບຂັ້ນຕອນການມອບເງິນລາຍຮັບງົບປະມານແຫ່ງລັດ ເຂົ້າບັນຊີເງິນຝາກຂອງລັດຖະບານຜ່ານລະບົບທະນາຄານ

- ອີງຕາມ ແຈ້ງການແນະນຳຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 3013/ກງ, ລົງວັນທີ 24 ພະຈິກ 2010 ກ່ຽວກັບການມອບເງິນລາຍຮັບງົບປະມານແຫ່ງລັດເຂົ້າບັນຊີເງິນຝາກຂອງລັດຖະບານຜ່ານລະບົບທະນາຄານ ໃນຂອບເຂດທົ່ວປະເທດ.

ເພື່ອຜັນຂະຫຍາຍ ບົດແນະນຳ ກ່ຽວກັບການມອບເງິນລາຍຮັບງົບປະມານແຫ່ງລັດ ເຂົ້າບັນຊີເງິນຝາກຂອງລັດຖະບານ ຜ່ານລະບົບທະນາຄານ ໃຫ້ເປັນເອກະພາບ ແລະ ມີປະສິດທິຜົນສູງ ເຮັດໃຫ້ການບໍລິການມີຄວາມວ່ອງໄວ, ທັນເຂົ້າສູ່ລະບົບທີ່ທັນສະໄໝເທື່ອລະກ້າວໃນຂອບເຂດທົ່ວປະເທດ.

### ຫ້ອງການກະຊວງການເງິນ ອອກແຈ້ງການເພີ້ມເຕີມວິທີຈັດຕັ້ງປະຕິບັດດັ່ງນີ້:

1. ການແຈ້ງມອບພັນທະເຂົ້າງົບປະມານໃຫ້ແຈ້ງຕໍ່ຂະແໜງການເກັບລາຍຮັບຄືເກົ່າຕາມລະບຽບກົດໝາຍທີ່ໄດ້ກຳນົດ ແລະ ປະຕິບັດຕາມຂັ້ນຕອນໃນການແຈ້ງເສຍຂອງຂະແໜງການເກັບລາຍຮັບ;

2. ຂັ້ນຕອນໃນການມອບລາຍຮັບເຂົ້າງົບປະມານແຫ່ງລັດສາມາດແຈ້ງມອບດ້ວຍເງິນສົດ, ແຊັກ, ການໂອນຈາກບັນຊີ, ການໂອນບັນຊີທາງດ້ານເອເລັກໂທນິກ, ບັດເອເລັກໂທນິກ ແລະ ເຄື່ອງມືການຊຳລະສະສາງທາງດ້ານການເງິນອື່ນໆ ທຸກຈຸດບໍລິການທະນາຄານທຸລະກິດຂອງລັດຄື: ທະນາຄານການຄ້າຕ່າງປະເທດລາວ, ທະນາຄານພັດທະນາລາວ ແລະ ທະນາຄານສົ່ງເສີມກະສິກຳ;

**2.1 ຈຸດບໍລິການຂອງທະນາຄານການຄ້າຕ່າງປະເທດລາວ.**

- ທະນາຄານການຄ້າຕ່າງປະເທດສຳນັກງານໃຫ່ຍ
- ທະນາຄານການຄ້າ ຕ່າງປະເທດລາວ ສາຂານະຄອນຫລວງ:
- ທະນາຄານການຄ້າຕ່າງປະເທດ ສາຂາດົງໂດກ:

- ໜ່ວຍບໍລິການ: ທ່ານາແລ້ງ, ຈອມເພັດ, ຕະຫລາດທາດຫລວງ, ຕະຫລາດເຊົ້າ, ດອນໜູນ, ຕະຫລາດສີໄຄ, ຕະຫລາດຊັງຈຽງ.

**2.2 ຈຸດບໍລິການຂອງທະນາຄານ ພັດທະນາລາວ**

- ທະນາຄານ ພັດທະນາລາວສຳນັກງານໃຫຍ
- ທະນາຄານພັດທະນາລາວສາຂານະຄອນຫລວງ
- ໜ່ວຍບໍລິການ ຊອບປິງມໍ(ຕະຫລາດເຊົ້າວຽງຈັນ), ໂພນໄຊ, ດອນໜູນ, ຈອມເພັດ.
- ໜ່ວຍແລກປ່ຽນ ຕະຫລາດມິດຕະພາບລາວ-ຈີນ(ໜອງດ້ວງ).

**2.3 ຈຸດບໍລິການຂອງທະນາຄານສົ່ງເສີມກະສິກຳ**

- ທະນາຄານສົ່ງເສີມກະສິກຳສາຂານະຄອນຫລວງ
- ໜ່ວຍບໍລິການ: ສີໂຄດຕະບອງ, ໄຊເສດຖາ, ສີສັດຕະນາກ, ຫາດຊາຍຟອງ, ນາຊາຍທອງ, ໄຊທານີ, ປາກງື່ມ, ສັງທອງ ແລະ ໜ່ວຍບໍລິການດົງໂດກ.

3. ພາຍຫລັງລູກຄ້າມອບລາຍຮັບງົບປະມານເຂົ້າບັນຊີເງິນຝາກຂອງ ລັດຖະບານຢູ່ທະນາຄານ, ທະນາຄານຕ້ອງ ເຊັນຢັ້ງຢືນ ແລະ ຈ້ຳກາປະທັບໃສ່ໃບແຈ້ງມອບ ຫຼື ໃບສັ່ງມອບພັນທະ, ໃບແຈ້ງໜີ້ ແລະ ແຈ້ງມີ ເພື່ອເປັນເອກະສານຢັ້ງຢືນການມອບ ພ້ອມນັ້ນໃຫ້ແຍກສຳເນົາ ແລະ ສົ່ງເອກະສານດັ່ງນີ້:

+ ກໍລະນີມອບດ້ວຍການໂອນ.

- ສະບັບຕົ້ນ (ໃບແຈ້ງມີ, ໃບແຈ້ງມອບ ຫຼື ໃບສັ່ງມອບພັນທະ, ເອກະສານຢັ້ງຢືນອື່ນໆ ທີ່ພົວພັນເຖິງການມອບພັນທະ) ຕ້ອງສົ່ງໃຫ້ຄັງເງິນແຫ່ງຊາດ.
- ໃບແຈ້ງໜີ້, ໃບແຈ້ງມອບ ຫຼື ໃບສັ່ງມອບພັນທະ, ເອກະສານທາງດ້ານການເງິນອື່ນ1 ຊຸດ ໃຫ້ຜູ້ມອບພັນທະ.
- ໃບແຈ້ງມອບ ຫຼື ໃບສັ່ງມອບພັນທະ, ເອກະສານທາງດ້ານການເງິນອື່ນ 1 ຊຸດ ໃຫ້ຂະແໜງການເກັບລາຍຮັບ.

+ ກໍລະນີມອບດ້ວຍເງິນສົດຢູ່ທະນາຄານ ໃຫ້ສຳເນົາໃບມອບເງິນສົດພ້ອມດ້ວຍເອກະສານຢັ້ງຢືນການມອບອື່ນໆທີ່ໄດ້ກຳນົດຂ້າງເທິງ.

4. ກໍລະນີມອບພັນທະເຂົ້າງົບປະມານ ຢູ່ທະນາຄານໂດຍກົງ ກ່ອນຂະແໜງການເກັບລາຍຮັບອອກໃບສັ່ງມອບ ທະນາຄານຕ້ອງລະບຸເນື້ອໃນ, ເລກລະຫັດທຍໍ້, ຈຳນວນເງິນ, ຊື່ ແລະ ເບີໂທລະສັບຂອງຜູ້ມອບໃສ່ໃບແຈ້ງມີ;

5. ກໍລະນີມອບພັນທະເຂົ້າງົບປະມານແຫ່ງລັດດ້ວຍຮູບການໂອນຜ່ານເອເລັກໂທນິກ: ອິນເຕີເນັດ, ເອທີເອັມ, ຜູ້ມອບພັນທະຕ້ອງພິມຫຼັກຖານການໂອນເພື່ອຢັ້ງຢືນ ແລະ ນຳເອົາໃບແຈ້ງມອບພັນທະສົ່ງໃຫ້ທະນາຄານເປັນລາຍລັກອັກສອນ ເພື່ອອອກໃບແຈ້ງມີໃຫ້ຄັງເງິນແຫ່ງຊາດ ແລະ ອອກໃບແຈ້ງໜີ້ໃຫ້ຜູ້ມອບພັນທະ;

6. ກໍລະນີມອບລາຍຮັບທີ່ບໍ່ເປັນປົກກະຕິ, ມີຈຳນວນເງິນໜ້ອຍ ແລະ ບາງປະເພດລາຍຮັບທີ່ເກີດຂຶ້ນຢູ່ເຂດຫ່າງໄກສອກຫລີກບ່ອນທີ່ບໍ່ມີໜ່ວຍບໍລິການຂອງທະນາຄານໃຫ້ປະຕິບັດຕາມ ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 0204/ກງ, ລົງວັນທີ 12/02/2009;

7. ສຳລັບຜູ້ມອບພັນທະ: ພາຍຫຼັງມອບລາຍຮັບເຂົ້າບັນຊີເງິນຝາກດັ່ງກ່າວຢູ່ທະນາຄານ **ໃຫ້ຖືເອົາໃບແຈ້ງໜີ້ຂອງທະນາຄານແທນໃບຮັບເງິນຂອງຄັງເງິນແຫ່ງຊາດ** ເປັນຫຼັກຖານການຢັ້ງຢືນການມອບ ໂດຍບໍ່ຕ້ອງກັບຄືນໄປຫາຄັງເງິນແຫ່ງຊາດ ແລະ ໃຫ້ເກັບມ້ຽນເອກະສານດັ່ງກ່າວນັ້ນໄວ້ເພື່ອເປັນຫຼັກຖານ;

8. ການສົ່ງຂໍ້ມູນ. ທະນາຄານຕ້ອງສົ່ງຂໍ້ມູນການລົງບັນຊີປະຈຳວັນ ພ້ອມເອກະສານຢັ້ງຢືນທາງດ້ານການເງິນ ໃຫ້ຄັງເງິນແຫ່ງຊາດເປັນປະຈຳວັນ, ເດືອນ, ປີ;

9. ຄັງເງິນແຫ່ງຊາດ ຕ້ອງສົ່ງເອກະສານຢັ້ງຢືນທາງດ້ານການເງິນ ໃຫ້ຂະແໜງການເກັບລາຍຮັບເພື່ອໃຫ້ຂະແໜງການດັ່ງກ່າວບັນທຶກບັນຊີ, ຕິດຕາມບັນດາຫົວໜ່ວຍທຸລະກິດໄດ້ມອບພັນທະ ແລະ ສະຫລຸບສົມທຽບຕົວລກໃຫ້ຖືກຕ້ອງ, ຄົບຖ້ວນຕາມການແຈ້ງມອບຂອງຜູ້ປະຕິບັດພັນທະຕໍ່ງົບປະມານ;

10. ການຈັດຕັ້ງປະຕິບັດມອບລາຍຮັບງົບປະມານເຂົ້າບັນຊີເງິນຝາກຂອງລັດຖະບານຢູ່ທະນາຄານ ແມ່ນເລີ້ມແຕ່ ວັນທີ 1 ມັງກອນ ປີ 2011 ເປັນຕົ້ນໄປ.

ໃນການປະຕິບັດຕົວຈິງຫາກພົບບັນຫາຫຍຸ້ງຍາກ ບໍ່ສາມາດແກ້ໄຂໄດ້, ໃຫ້ນຳສະເໜີຄັງເງິນແຫ່ງຊາດ ຫຼື ຂະແໜງການເກັບລາຍຮັບເພື່ອຄົ້ນຄວ້າພິຈາລະນາ ແລະ ຫາວິທີແກ້ໄຂໃຫ້ທັນເວລາ.

ລ/ ຫົວໜ້າຫ້ອງການກະຊວງການເງິນ

ສີແພງ ພົນອາມາດ